ພະຍາທອນ ວຽງຈັນ
23–32°C
ວັນຈັນ 16/11 · ແຈ່ມໃສ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນຈັນ 16 ພະຈິກ 2026 · ສະບັບທີ 022 | ສະຫຼຸບຂ່າວປະຈຳວັນສຸກ 13 – ວັນອາທິດ 15 ພະຈິກ 2026 · 24 ຂ່າວ | 20 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ຂ່າວພາຍໃນ** · 11:51 ໂມງ · ອ່ານ 35 ຄັ້ງ

ສານປະຊາຊົນແຂວງບໍ່ແກ້ວ ຕັດສິນປະຫານຊີວິດຈຳເລີຍ 3 ຄົນ ແລະ ຄົນຕ່າງປະເທດອີກ 3 ຄົນຈຳຄຸກຕະຫຼອດຊີວິດ ໃນຂໍ້ຫາຄ້າຢາເສບຕິດ (ຢາບ້າ)



ໃນວັນທີ 12 ພະຈິກ 2026, ເວລາ 9 ໂມງ 35 ນາທີ, ຢູ່ທີ່ຫ້ອງປະຊຸມສານ ຂອງສານປະຊາຊົນ ແຂວງ ບໍ່ແກ້ວ.

ຄະນະສານອາຍາ ຂັ້ນຕົ້ນ ຂອງສານປະຊາຊົນ ແຂວງ ບໍ່ແກ້ວ ໄດ້ນຳຄະດີທີ່ກ່ຽວພັນກັບຢາເສບຕິດທີ່ ກົດໝາຍກຳນົດອັດຕາການລົງໂທດທີ່ສູງ ອອກມາພິຈາ ລະນາຈຳນວນ 3 ເລື່ອງ, ມີຈຳເລີຍ 6 ຄົນ ເປັນຄົນຕ່າງ ປະເທດ 3 ຄົນ, ເຊິ່ງໃນຈຳນວນຄະດີ 3 ເລື່ອງ ທີ່ກ່າວ ມານີ້ມີໂທດປະຫານຊີວິດ ຈຳນວນ 2 ເລື່ອງ ແລະ ໂທດຕະຫຼອດຊີວິດ 1 ເລື່ອງ. ມີລາຍລະອຽດໂດຍຫຍໍ້

ຕໍ່ໜ້າ 2

◆ **ເຕັກໂນໂລຊີ** · 13:01 ໂມງ

Microsoft ລະບົບລົ່ມຄັ້ງໃຫຍ່! ກະທົບຜູ້ໃຊ້ງານທົ່ວໂລກ Outlook ອຳມະພາດຫຼາຍຊົ່ວໂມງ ຮັບ-ສົ່ງອີເມວບໍ່ໄດ້



ວັນທີ 12 ພະຈິກ 2026, Microsoft ປະເຊີນກັບ ລະບົບຂັດຂ້ອງຄັ້ງໃຫຍ່ ເຊິ່ງສົ່ງຜົນກະທົບຕໍ່ບໍລິການ Outlook, Teams ແລະ Microsoft 365 ໃນຫຼາຍ ພາກພື້ນທົ່ວໂລກ.

ຜູ້ໃຊ້ງານຈຳນວນຫຼາຍບໍ່ສາມາດເປີດອີເມວ, ສົ່ງ ຂໍ້ຄວາມ ຫຼື ຮັບອີເມວໄດ້ຕາມປົກກະຕິ.

ເວັບໄຊ Downdetector ພົບລາຍງານບັນຫາ Outlook ເກືອບ 130,000 ຄັ້ງໃນສະຫະລັດ ພາຍໃນ

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວພາຍໃນ
3 ເຕັກໂນໂລຊີ
8 ເສດຖະກິດ-ສັງຄົມ
11 ທ່ອງທ່ຽວ
12 ສາລະໜ້າຮູ້
14 ຂ່າວຕ່າງປະເທດ
17 Uncategorized
19 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
20 ທ້າຍສະບັບ



◆ **ສາລະໜ້າຮູ້** · 14:22 ໂມງ

ກິນຫວານຫຼາຍ ເຮັດໃຫ້ກາຍເປັນຄົນອາລົມຮ້າຍ ຫງຸດຫງິດງ່າຍ...

ອ່ານໜ້າ 12 ▸



◆ **ຂ່າວພາຍໃນ** · 15:45 ໂມງ

ເຈົ້າໜ້າທີ່ລົງແກ້ໄຂກຸ່ມກໍ່ອາຊະຍາກຳ ບ້ານໄຊ ສະຫວ່າງ ກັກຕົວ...

ອ່ານໜ້າ 3 ▸



◆ **ຂ່າວພາຍໃນ** · 13:26 ໂມງ

ມອບ-ຮັບຈຸດກວດກາ ຢາເສບຕິດ ຢູ່ເມືອງໜິງ ສາ ແຂວງໄຊຍະບູລີ...

ອ່ານໜ້າ 3 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ສານປະຊາຊົນແຂວງບໍ່ແກ້ວ ຕັດສິນປະຫານຊີວິດຈຳເລີຍ 3 ຄົນ ... (ຕໍ່ຈາກໜ້າ 1)

ດັ່ງນີ້:

1. ສຳນວນຄະດີອາຍາ ເລກທີ 338/ຂຕ.ອ, ລົງວັນທີ 16 ຕຸລາ 2026 ລະຫວ່າງ:

ຫົວໜ້າອົງການໄອຍະການ ປະຊາຊົນແຂວງ ບໍ່ແກ້ວ (ໂຈດ);

ທ້າວ ນະວິໄຊ ຈະເຍັຍຢີ ອາຍຸ 28 ປີ, ອາຊີບ ຂັບລົດ, ສັນຊາດ ລາວ, ຊົນເຜົ່າ ມົ້ງ, ປັດຈຸບັນຢູ່ບ້ານ ກຸຫຼົງ, ເມືອງ ນາໝໍ້, ແຂວງ ອຸດົມໄຊ (ຈຳເລີຍ1);

ທ້າວ ບີຊົງ ຈົງລີ ອາຍຸ 23 ປີ, ອາຊີບ ຂັບລົດ, ສັນຊາດ ລາວ, ຊົນເຜົ່າ ມົ້ງ, ປັດຈຸບັນຢູ່ບ້ານ ຢ້າວໃຫ່ຍ, ເມືອງ ໄຊ, ແຂວງ ອຸດົມໄຊ (ຈຳເລີຍ2);

ໂດຍມີ ທະນາຍຄວາມ ເປັນຜູ້ ປົກປ້ອງສິດ ແລະ ຜົນປະໂຫຍດຕາມ ກົດໝາຍໃຫ້ແກ່ ຈຳເລີຍ1 ແລະ ຈຳເລີຍ 2;

ພວກຈຳເລີຍ ທັງ2 ຖືກຫາວ່າ: ຂົນສົ່ງຢາເສບຕິດ (ປະເພດ ຢາບ້າ); ຖືກ ກັກຕົວ: ວັນທີ 3 ກໍລະກົດ 2025; ສະຖານທີ່ກັກຂັງ: ຄ້າຍຄຸມຂັງ-ດັດສ້າງ ປກສ ແຂວງ ບໍ່ແກ້ວ.

ຜ່ານການພິຈາລະນາຂໍ້ມູນຫຼັກຖານ ຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ແລ້ວ ຄະນະສານອາຍາ ຂັ້ນຕົ້ນ ຂອງສານ ປະຊາຊົນແຂວງ ບໍ່ແກ້ວ ຈຶ່ງໄດ້ຕັດສິນຕໍ່ ໜ້າປະຊາຊົນ ໂດຍຊ້ອງໜ້າໂຈດ, ທະນາຍຄວາມ ແລະ ພວກຈຳເລີຍ ທັງ 2 ຄົນ ບອກວ່າ: ທ້າວ ນະວິໄຊ ຈະເຍັຍຢີ (ຈຳເລີຍ1) ແລະ ທ້າວ ບີຊົງ ຈົງລີ (ຈຳ ເລີຍ2) ມີຄວາມຜິດທາງອາຍາຕາມ ມາດຕາ 315ວັກ ສີ່ ໃນສະຖານ ຄະຮຸ ໂຫດ ໃນຂໍ້ກ່າວຫາ ຂົນສົ່ງຢາເສບຕິດ (ປະເພດ ຢາບ້າ); ລົງໂທດ ທ້າວ ນະວິໄຊ ຈະເຍັຍຢີ (ຈຳເລີຍ1) ແລະ ທ້າວ ບີຊົງ ຈົງລີ (ຈຳເລີຍ2) ປະຫານຊີວິດ; ຮິບ ຂອງກາງຢາເສບຕິດ (ປະເພດ ຢາບ້າ) ຈຳ ນວນ ສອງຮ້ອຍເຈັດສິບເຈັດ (277) ມັດ ມີນ້ຳໜັກເທົ່າ ກັບ ຫ້າສິບຫ້າຈຸດສີ່ (55,4) ກິໂລກຣາມ ແລ້ວມອບໃຫ້ ພາກສ່ວນກ່ຽວຂ້ອງນຳໄປທຳລາຍຖິ້ມ; ຮິບ ໂທລະສັບຍີ່ຫໍ້ iPhone ສີທອງ ໜຶ່ງ (1) ໜ່ວຍ, ລົດເມ HYUNDAI ສີຂາວ ໝາຍເລກທະບຽນ ຍກ 0513 ອຸດົມໄຊ ເຂົ້າເປັນຂອງລັດ ແລ້ວມອບໃຫ້ພາກສ່ວນ ກ່ຽວຂ້ອງຄຸ້ມຄອງຕາມລະບຽບການ; ຮິບ ທີ່ດິນ ໜຶ່ງ (1) ຕອນ ມີຫ້ອງແຖວ ສາມ (3) ຫ້ອງ ແລະ ຫ້ອງເກັບເຄື່ອງ ສອງ (2) ຫ້ອງ ເຂົ້າເປັນຂອງລັດ ແລ້ວມອບໃຫ້ ພາກສ່ວນກ່ຽວຂ້ອງຄຸ້ມຄອງຕາມລະບຽບ ການ. ສັ່ງ ໂທລະສັບ ຍີ່ຫໍ້ Oppo ສີເທົາ ໜຶ່ງ (1) ໜ່ວຍ ຄືນໃຫ້ແກ້ ຈຳເລີຍ1. ຍົກເວັ້ນ ຄ່າທຳນຽມສານ ແລະ ຄ່າເອກະ ສານຕ່າງໆ ຈຳນວນ 800.000 ກີບ ໃຫ້ ແກ່ ພວກຈຳເລີຍ;

2. ສຳນວນຄະດີອາຍາ ເລກທີ 279/ຂຕ.ອ, ລົງວັນທີ 16 ກັນຍາ 2026 ລະຫວ່າງ:

ຫົວໜ້າອົງການໄອຍະການ ປະຊາຊົນແຂວງ ບໍ່ແກ້ວ (ໂຈດ);

ທ້າວ ຂັນຄຳ ກົງທອງ, ອາຍຸ 44 ປີ, ອາຊີບ ພະນັກງານຄຸ, ສັນຊາດ ລາວ, ຊົນເຜົ່າ ລື, ຢູ່ບ້ານ ຜາຂາວ, ເມືອງ ເມິງ, ແຂວງ ບໍ່ແກ້ວ (ຈຳເລີຍ).

ໂດຍມີ ທະນາຍຄວາມ ເປັນຜູ້ ປົກປ້ອງສິດ ແລະ ຜົນປະໂຫຍດຕາມ ກົດໝາຍໃຫ້ແກ່ ຈຳເລີຍ.

ຈຳເລີຍຖືກຫາວ່າ: ການມີຢາ ເສບຕິດໄວ້ໃນຄອບຄອງ (ປະເພດ ຢາ ບ້າ); ຖືກກັກຕົວ ຫຼື ຈັບຕົວ: ວັນທີ 23 ກຸມພາ 2024; ສະຖານທີ່ກັກຂັງ: ຄ້າຍ ຄຸມຂັງ-ດັດສ້າງ ປກສ ແຂວງ ບໍ່ແກ້ວ.

ຈຳເລີຍ ຖືກຫາວ່າ: ການມີຢາ ເສບຕິດໄວ້ໃນຄອບຄອງ (ປະເພດ ຢາ ບ້າ); ຖືກກັກຕົວ ຫຼື ຈັບຕົວ: ວັນທີ 23 ກຸມພາ 2024; ສະຖານທີ່ກັກຂັງ: ຄ້າຍ ຄຸມຂັງ-ດັດສ້າງ ປກສ ແຂວງ ບໍ່ແກ້ວ.

ຜ່ານການພິຈາລະນາຂໍ້ມູນຫຼັກຖານ ຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ແລ້ວ ຄະນະສານອາຍາ ຂັ້ນຕົ້ນ ຂອງສານ ປະຊາຊົນແຂວງ ບໍ່ແກ້ວ ຈຶ່ງໄດ້ຕັດສິນຕໍ່ ໜ້າປະຊາຊົນ ໂດຍຊ້ອງໜ້າ ໂຈດ, ທະນາຍຄວາມ ແລະ ຈຳເລີຍ ບອກວ່າ:

ທ້າວ ຂັນຄຳ ກົງທອງ (ຈຳເລີຍ) ມີ ຄວາມຜິດທາງອາຍາ ໃນສະຖານຄະຮຸໂຫດ ຕາມມາດຕາ 315 ວັກ ສີ່ ໃນຂໍ້ກ່າວຫາ ມີຢາເສບຕິດ ໄວ້ໃນຄອບຄອງ (ປະເພດ ຢາບ້າ); ລົງໂທດ ທ້າວ ຂັນຄຳ ກົງທອງ (ຈຳເລີຍ) ປະຫານຊີວິດ; ຮິບ ຂອງກາງຢາ ເສບຕິດ (ປະເພດຢາບ້າ) ຈຳນວນ ສິບ (10) ແພັກ ມີນ້ຳໜັກ ສິບ (10) ກິໂລກຣາມ ແລ້ວນຳໄປ ທຳລາຍຖິ້ມ; ສັ່ງ ໂທລະສັບມືຖື ຍີ່ຫໍ້ Oppo ສີດຳ ໜຶ່ງ (1) ໜ່ວຍ ຄືນໃຫ້ແກ່ ຈຳເລີຍ. ຍົກເວັ້ນ ຄ່າທຳນຽມສານ ທັງໝົດໃຫ້ແກ່ ຈຳເລີຍ;

3. ສຳນວນຄະດີ ອາຍາ ເລກທີ 353/ຂຕ.ອ. ລົງວັນທີ 30 ກັນຍາ 2026 ລະຫວ່າງ:

ຫົວໜ້າອົງການໄອຍະການ ປະຊາຊົນແຂວງ ບໍ່ແກ້ວ (ໂຈດ);

ທ້າວ ອາຫຼົງ, ອາຍຸ 29 ປີ, ອາຊີບ (ບໍ່ມີ), ສັນຊາດ ມຽນມາ, ຢູ່ບ້ານ ຊ່ຳໄຊ, ເມືອງ ທ່າຂີ້ເຫຼັກ, ແຂວງ ຈີງຕົງ, ມາພັກ ເຊົ່າຢູ່ບ້ານ ພຽງງາມ, ເມືອງ ຕົ້ນເຜິ້ງ, ແຂວງ ບໍ່ແກ້ວ (ຈຳເລີຍ 1);

ທ້າວ ອາຊອນ, ອາຍຸ 33 ປີ, ອາຊີບ (ບໍ່ມີ), ສັນຊາດ ມຽນມາ, ຢູ່ບ້ານ ປາແລ້ງ, ເມືອງ ທ່າຂີ້ເຫຼັກ, ແຂວງ ຈີງຕົງ, ມາພັກເຊົ່າຢູ່ບ້ານ ພຽງງາມ, ເມືອງ ຕົ້ນ ເຜິ້ງ, ແຂວງ ບໍ່ແກ້ວ (ຈຳເລີຍ 2);

ທ້າວ ຫຼົງຫຼົງ, ອາຍຸ 37 ປີ, ອາຊີບ (ບໍ່ມີ), ສັນຊາດ ມຽນມາ, ຢູ່ບ້ານ ຕອງຈີ, ແຂວງ ຕອງຈີ, ມາພັກເຊົ່າຢູ່ບ້ານ ພຽງງາມ, ເມືອງ ຕົ້ນເຜິ້ງ, ແຂວງ ບໍ່ແກ້ວ (ຈຳເລີຍ 3);

ໂດຍມີ ຜູ້ແປພາສາທີ່ຖືກແຕ່ງຕັ້ງ ເຂົ້າຮ່ວມຕາມກົດໝາຍ ເປັນຜູ້ແປພາສາ;

ພວກຈຳເລີຍ 1-2 ຖືກຫາວ່າ: ມີ ຢາເສບຕິດໄວ້ໃນຄອບຄອງ (ຢາບ້າ) ແລະ ຈຳເລີຍ 3 ຄ້າຂາຍຢາເສບຕິດ (ຢາບ້າ); ຖືກຈັບຕົວ: ວັນທີ 20 ມັງກອນ 2026; ສະຖານທີ່ກັກຂັງ: ຄ້າຍຄຸມຂັງ-ດັດສ້າງ ແຂວງບໍ່ແກ້ວ.

ຜ່ານການພິຈາລະນາຂໍ້ມູນຫຼັກຖານ ຢ່າງຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ແລ້ວ ຄະນະສານອາຍາ ຂັ້ນຕົ້ນ ຂອງສານ ປະຊາຊົນແຂວງ ບໍ່ແກ້ວ ຈຶ່ງໄດ້ຕັດສິນຕໍ່ ໜ້າປະຊາຊົນ ໂດຍຊ້ອງໜ້າ ໂຈດ, ທະນາຍຄວາມ ແລະ ຈຳເລີຍ ບອກວ່າ: ທ້າວ ອາຫຼົງ (ຈຳ ເລີຍ1) ແລະ ທ້າວ ອາຊອນ (ຈຳເລີຍ2) ມີຄວາມຜິດທາງອາຍາໃນສະຖານ ຄະຮຸ ໂຫດ ຕາມມາດຕາ 315 ວັກ ສາມ ຂໍ້ ກ່າວຫາ ມີຢາເສບຕິດໄວ້ໃນຄອບຄອງ (ຢາບ້າ) ແລະ ທ້າວ ຫຼົງຫຼົງ (ຈຳເລີຍ3) ຂໍ້ ກ່າວຫາ ຄ້າຂາຍຢາເສບຕິດ (ຢາບ້າ);

ລົງໂທດຕັດອິດສະລະພາບ ຈຳເລີຍ 1, ຈຳເລີຍ2 ແລະ ຈຳເລີຍ3 ຕະຫຼອດ ຊີ ວິ ດ ແລ ະ ປັ ບ ໃໝ ຜູ້ ລ ະ 500,000,000 ກີບ; ຮິບ ຂອງກາງຢາ ບ້າ ຈຳນວນ ສີ່ສິບຫ້າ (45) ຖົງນ້ອຍ ກັບ ສອງ (2) ເມັດ ລວມກັນເທົ່າກັບ ເກົ້າສິບ ພັນ ສອງ (90,002) ເມັດ, ມີນ້ຳໜັກ ເຈັດຮ້ອຍແປດສິບເກົ້າຈຸດເກົ້າສິບເກົ້າ (789,99) ກຣາມ ແລ້ວນຳໄປທຳລາຍ ຖິ້ມ; ຮິບ ໂທລະສັບ iPhone ສີດຳ ໜຶ່ງ ໜ່ວຍ, ໂທລະສັບ Vivo ສີຟ້າ ໜຶ່ງ (1) ໜ່ວຍ, ໂທລະສັບ iPhone ສີຂາວ ໜຶ່ງ (1) ໜ່ວຍ ແລະ ລົດຈັກເວບ ຈີນ ສີດຳ ໜຶ່ງ (1) ຄັນ ເປັນຂອງລັດ; ສັ່ງ ໂທລະສັບ Oppo ສີດຳ ໜຶ່ງ (1) ໜ່ວຍ ຄືນໃຫ້ແກ່ ທ້າວ ຫຼົງຫຼົງ (ຈຳເລີຍ3); ໃຫ້ ພວກຈຳເລີຍ ຈ່າຍເງິນຄ່າທຳນຽມສານ ຜູ້ ລະ 500,000 ກີບ ໃຫ້ແກ່ລັດ;

ສະຫຼຸບສັງລວມແລ້ວການນຳຄະດີ ອາຍາທັງສາມເລື່ອງອອກມາຕັດສິນ ຕໍ່ໜ້າ ປະຊາຊົນໃນຄັ້ງນີ້ແມ່ນເພື່ອໃຫ້ສັງຄົມ ຮັບຮູ້, ເຂົ້າໃຈເຖິງຄວາມເປັນອັນຕະລາຍ ຂອງການກະທຳຜິດ, ເຫັນໄດ້ເຖິງຄວາມ ສັກສິດ ແລະ ຄວາມຍຸຕິທຳຂອງກົດໝາຍ ສປປ ລາວ.

ພາບ-ຂ່າວ: ສານປະຊາຊົນແຂວງ ບໍ່ ແກ້ວ.

Microsoft ລະບົບລົ່ມຄັ້ງໃຫຍ່! ກະທົບຜູ້ໃຊ້ງານທົ່ວໂລກ Out... (ຕໍ່ຈາກໜ້າ 1)

ຊ່ວງເວລາໜຶ່ງ.

Microsoft ຢືນຢັນວ່າ ບັນຫາດັ່ງ ກ່າວເລີ່ມສົ່ງຜົນກະທົບຢ່າງຊັດເຈນໃນ ພາກພື້ນອາເມຣິກາ ແລະ ອາດສົ່ງຜົນ ກະທົບຕໍ່ຜູ້ໃຊ້ Microsoft 365 ໃນ ທຸກພາກພື້ນທົ່ວໂລກ.

ສາເຫດເກີດຈາກເຊີບເວີຈຳນວນ ໜຶ່ງຢຸດທຳງານກະທັນຫັນ ເຮັດໃຫ້ໂຄງສ້າງ ພື້ນຖານທີ່ເຫຼືອຕ້ອງຮັບພາລະໜັກ. ບໍລິສັດໄດ້ເຮ່ງລະງັບການປັບໃຊ້ລະບົບ, ກະຈາຍການເຊື່ອມຕໍ່ ແລະ ຄຸ້ສະຕາດເຊີ ບເວີເພື່ອໂຄສະນາຄືນບໍລິການ. ແຕ່ເຊີ ບເວີບາງສ່ວນກັບຢຸດຕອບສະໜອງຊ້ຳ ເມື່ອມີຜູ້ໃຊ້ງານເຊື່ອມຕໍ່ເຂົ້າມາ.

ວິກິດການດັ່ງກ່າວໄດ້ລຸກລາມຂອດ ໜ່ວຍງານລາຊະການນະຄອນນິວຢອກ ທີ່ ຕ້ອງປະກາດເຕືອນປະຊາຊົນວ່າ ອີເມວ ແລະ ບໍລິການອອນໄລນ໌ອາດຢຸດສະຊັກ. ສ່ວນ Microsoft Teams ບໍລິສັດ ລະບຸວ່າສາມາດຟື້ນຟູບໍລິການທີ່ໄດ້ຮັບຜົນ ກະທົບກ່ອນໜ້ານີ້ແລ້ວ.

ຫຼ້າສຸດ ຕາມລາຍງານວັນທີ 13 ພະຈິກ ຕາມເວລາໄທ, Microsoft ຍັງຄົງເຮ່ງກູ້ລະບົບ Outlook ໂດຍຍັງບໍ່

ຕໍ່ໜ້າ 3

Microsoft ລະບົບລົ້ມຄັ້ງໃຫຍ່! ກະທົບຜູ້ໃຊ້ງານທົ່ວໂລກ Out... (ຕໍ່ຈາກໜ້າ 2)

ທັນໄດ້ຢືນຢັນວ່າບໍລິການທັງໝົດກັບຄືນສູ່ສະພາບປົກກະຕິ.

ແຫຼ່ງຂ່າວ: ນັກຂ່າວ

◆ **ຂ່າວພາຍໃນ** · 15:45 ໂມງ · ອ່ານ 23 ຄັ້ງ

ເຈົ້າໜ້າທີ່ລົງແກ້ໄຂກຸ່ມກໍ່ອາຊະຍາກຳ ບ້ານໄຊສະຫວ່າງ ກັກຕົວສັນຊາດຫວຽດນາມ ໄດ້ 8 ຄົນ



ໃນວັນທີ 13 ພະຈິກ 2026, ເຈົ້າໜ້າທີ່ໜ່ວຍສະເພາະກິດ ກະຊວງປ້ອງກັນຄວາມສະຫງົບ ໄດ້ລົງແກ້ກຸ່ມກໍ່ອາຊະຍາກຳທາງອິນເຕີເນັດ ແລະ ການພະນັນອອນລາຍ ຢູ່ບ້ານໄຊສະຫວ່າງ ເມືອງໄຊທານີ ນະຄອນຫຼວງວຽງຈັນ ກັກຕົວຜູ້ຖືກຫາສັນຊາດຫວຽດນາມ ໄດ້ 8 ຄົນ ຍິງ 1 ຄົນ.

ໃນນີ້, ເຄື່ອງຂອງກາງທີ່ເກັບກູ້ໄດ້ ມີ: ໂທລະສັບຈຳນວນ 42 ໜ່ວຍ, ຄອມພິວເຕີຕັ້ງໂຕະ 10 ໜ່ວຍ, ພອດ ຈຳນວນ 3 ອັນ.

ຂ່າວ: ຄວາມສະຫງົບ

◆ **ຂ່າວພາຍໃນ** · 13:26 ໂມງ · ອ່ານ 22 ຄັ້ງ

ມອບ-ຮັບຈຸດກວດກາຢາເສບຕິດ ຢູ່ເມືອງຫົງສາ ແຂວງໄຊຍະບູລີ ມູນຄ່າ 280.000 ໂດລາ



ພິທີມອບ-ຮັບຈຸດກວດກາຢາເສບຕິດ ແລະ ອາຊະຍາ ກຳທຸກປະເພດທີ່ ເມືອງຫົງສາ ແຂວງໄຊຍະບູລີ ພາຍໃຕ້ໂຄງການຊ່ວຍເຫຼືອ ຈາກກອງທຶນຊັບສິນທີ່ຖືກຣິບ ຂອງອົດສະຕຣາລີ ແລະ ຕຳຫຼວດແຫ່ງຊາດ ອົດສະຕຣາລີ ໄດ້ຈັດຂຶ້ນ ໃນວັນທີ 13 ພະຈິກ 2026 ທີ່ຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ ກົມໃຫຍ່ຕຳຫຼວດ ກະຊວງ ປກສ, ເຂົ້າຮ່ວມໂດຍ ທ່ານ ພົນຈັດຕະວາ ສາລີ ພຸດທະວົງ ຮອງຫົວໜ້າກົມໃຫຍ່ຕຳຫຼວດ, ທ່ານ ເຄຼກ ພາມເມີ ຜູ້ບັນ ຊາການຕຳຫຼວດແຫ່ງຊາດອົດສະຕຣາລີ ປະຈຳພາກພື້ນອາຊີ ຕາເວັນອອກສຽງໃຕ້ ແລະ ທ່ານ ນາງ ແມ ແກນ ຈອນ ເອກອັກ ຄະລັດຖະທູດ ອົດສະຕຣາລີ ປະຈຳ ສປປ ລາວ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງ ເຂົ້າຮ່ວມ.

ທ່ານ ພັນເອກ ຈັນທອນ ເຮືອງຄຳໄຊ ຫົວໜ້າຫ້ອງການກວດກາ ແລະ ຄວບຄຸມຢາເສບຕິດ ກ່າວວ່າ: ຜົນສຳເລັດຂອງໂຄງ ການກໍ່ສ້າງ ຈຸດກວດກາຢາເສບຕິດ ທີ່ບ້ານໂພນຈັນ ເມືອງຫົງສາ ແຂວງໄຊຍະບູລີ. ໂຄງການດັ່ງ ກ່າວແມ່ນພາຍໃຕ້ສາຍພົວພັນ ແລະ ການ ຮ່ວມມືອັນດີງາມລະຫວ່າງ ລາວ- ອົດສະ ຕຣາລີ ໂດຍໄດ້ຮັບການອະນຸມັດເຫັນດີໃຫ້ ກໍ່ສ້າງຈຸດກວດກາດັ່ງກ່າວຈາກ ທ່ານ ລັດຖະມົນຕີກະ ຊວງປ້ອງກັນຄວາມ ສະຫງົບ ຕາມໜັງສືສະເໜີ ໃນປີ 2024; ເຊິ່ງໄດ້ຮັບການມອບໝາຍຈາກກົມໃຫຍ່ ຕຳຫຼວດ ກະຊວງປ້ອງກັນຄວາມສະຫງົບ

ຕໍ່ໜ້າ 4

ມອບ-ຮັບຈຸດກວດກາຢາເສບຕິດ ຢູ່ເມືອງຫົງສາ ແຂວງໄຊຍະບູລີ ... (ຕໍ່ຈາກໜ້າ 3)

ໃຫ້ຫ້ອງການກວດກາ ແລະ ຄວບ ຄຸມຢາ ເສບຕິດ ສົມທົບກັບຄະນະຮັບຜິດຊອບ, ກອງບັນ ຊາການ ປກສ ແຂວງໄຊຍະບູລີ, ກອງບັນ ຊາການ ປກສ ເມືອງຫົງສາ, ອຳ ນາດການປົກຄອງທ້ອງ ຖິ່ນ ເປັນຜູ້ຕິດ ຕາມການຈັດຕັ້ງປະຕິບັດໂຄງການກໍ່ສ້າງ ຮ່ວມກັບ ບໍລິສັດຮັບເໝົາກໍ່ສ້າງແຕ່ມີການ ເລີ່ມຕົ້ນກໍ່ສ້າງ ຈົນສຳເລັດ.

ຈຸດກວດກາຢາເສບຕິດ ເມືອງຫົງ ສາ ເປັນໂຄງການ ໜຶ່ງທີ່ໄດ້ຮັບການ ສະໜັບສະໜຸນຊ່ວຍລ້ຳດ້ານເງິນງົບ ປະມານ ຈາກກອງທຶນຊັບສິນ ທີ່ຖືກຍຶດ ຂອງລັດຖະບານອົດສະຕຣາລີ ແລະ ຕຳ ຫຼວດແຫ່ງຊາດອົດສະຕຣາລີ ເພື່ອນຳມາກໍ່ ສ້າງ ເຊິ່ງການກໍ່ສ້າງດັ່ງກ່າວ ໄດ້ແບ່ງອອກ ເປັນ 2 ໄລຍະ ຄື: ໄລຍະທີ 1 ໄດ້ບຸກ ເບີກດິນ, ຖາກພູ, ເພື່ອໃຫ້ມີເນື້ອທີ່ດິນ ປຸກສ້າງ, ໄດ້ປຸກສ້າງອາຄານ 2 ຫຼັງ ຄື: ອາຄານຫ້ອງການ ແລະ ອາຄານເຮືອນ ນອນ ໂດຍແມ່ນ ບໍລິສັດ ໂມເດີນດີຊາຍ ຈຳກັດຜູ້ດຽວ ເປັນຜູ້ຮັບເໝົາ ໄດ້ເລີ່ມຈັດ ຕັ້ງປະຕິບັດ ໃນເດືອນ ຕຸລາ 2024, ສຳ ເລັດ 100% ໃນເດືອນ ທັນວາ 2025; ໄລຍະທີ 2 ເປັນການກໍ່ສ້າງຕໍ່ເຕີມ ເຮືອນຄົວ, ປຸກປ້ອມຍາມ, ບ່ອນຈອດລົດ, ເທຄອນກີດທາງເຂົ້າອອກ, ຫ້ອງນ້ຳນອກ, ປັບໜ້າດິນ, ເຮັດກັນເຈື່ອນ, ເຮັດຮ່ອງ ລະບາຍນ້ຳອ້ອມເນື້ອທີ່ດິນ, ເຮັດຫ້ອງນ້ຳ ນອກ, ຕິດຕັ້ງແອ, ພັດລົມ,ໄຟຟ້າ, ນ້ຳປະ ປາເຂົ້າອາຄານ, ປະກອບເຄື່ອງເຟີນີເຈີໂຕະ ຕັ້ງຫ້ອງປະຊຸມ ແລະ ຫ້ອງເຮັດວຽກ, ຕຽງນອນ, ອຸປະກອນຮັບໃຊ້ວຽກງານວິຊາ ສະເພາະເຊັ່ນ: ຄອມພິວເຕີ້, ກັບມື, ເຄື່ອງ ກວດນ້ຳປັດສະວະຫາສານເສບ ຕິດ, ໂດມ, ກ້ອງວົງຈອນປິດ ແລະ ເຄື່ອງຮັບໃຊ້ ຫ້ອງການ, ເຮືອນຄົວ ແລະອື່ນໆ ລວມ ມູນຄ່າ ທັງໝົດ 280.000 ໂດ ລາ ສະຫະລັດ ໂດຍແມ່ນ ບໍລິສັດ ແສງມະນີ ຈຳກັດຜູ້ດຽວ ເປັນຜູ້ຮັບເໝົາ ແລະ ເລີ່ມ ຈັດຕັ້ງປະຕິບັດ ໃນເດືອນພຶດ ສະພາ 2026 ແລະ ສຳເລັດ 100% .

ໃນໂອກາດດັ່ງກ່າວນີ້, ທ່ານ ພົນ ຈັດຕະວາ ສາລີ ພຸດທະວົງ ໄດ້ກ່າວ ສະແດງຄວາມຂອບໃຈ ມາຍັງທ່ານ ເຄຼກ ພາມເມີ ຜູ້ບັນຊາການຕຳຫຼວດ ປະຈຳພາກ ພື້ນອາຊີຕາເວັນອອກສຽງໃຕ້ ທີ່ໄດ້ໃຫ້ ການສະໜັບສະໜຸນງົບປະມານໃນການ ກໍ່ສ້າງຈຸດກວດກາຢາເສບຕິດ ແລະ ຊ່ວຍເຫຼືອທາງດ້ານອຸປະກອນຮັບໃຊ້ ວຽກງານວິຊາສະເພາະ ໃຫ້ ສປປ ລາວ ໃນຄັ້ງນີ້. ຜົນສຳເລັດໃນການກໍ່ສ້າງຈຸດ ກວດກາຢາເສບຕິດດັ່ງກ່າວຈະເປັນເງື່ອນ ໄຂໃນການປະກອບສ່ວນເຂົ້າໃນວຽກງານ ກວດກາ, ຄວບຄຸມ, ຕ້ານ ແລະ ສະກັດ ກັ້ນຢາເສບຕິດ ຂອງແຂວງໄຊຍະບູລີ ໃນ ສະເພາະໜ້າ ແລະ ຍາວນານ, ຂໍຢືນຢັນວ່າ ຈະພ້ອມກັນຄຸ້ມຄອງ ແລະ ນຳໃຊ້ຈຸດ ກວດກາຢາເສບຕິດແຫ່ງນີ້ ໃຫ້ເກີດ ປະໂຫຍດ ແລະ ມີປະສິດທິຜົນສູງ ເພື່ອ ຍົກລະດັບສະມັດຕະພາບວຽກງານສະກັດ ກັ້ນ ໂດຍສະເພາະ ແມ່ນການກວດກາ, ການສັນຈອນຂອງລົດ ທີ່ເປັນເປົ້າໝາຍລຳ ລຽງຂົນສົ່ງຄ້າ ຂາຍຢາເສບຕິດ ໃຫ້ມີປະ ສິດທິຜົນສູງຂຶ້ນ ຕາມຈຸດປະສົງ ແລະ ຄາດໝາຍທີ່ໄດ້ວາງໄວ້ ເຮັດໃຫ້ການລັກ ລອບລຳລຽງຂົນສົ່ງຢາເສບຕິດໜຽດລົງເທື່ອ ລະກ້າວ.

ໃນພິທີ, ບັນດາແຂກຜູ້ເຂົ້າຮ່ວມ ກໍ ໄດ້ຕັດແຖບຜ້າ ແລະ ມອບ-ຮັບ ໂຄງການ ຢ່າງເປັນທາງການ ແລະ ໃນຕອນທ້າຍພິທີ, ຕຳຫຼວດແຫ່ງຊາດອົດສະຕຣາລີ ຍັງໄດ້ ມອບອຸ ປະກອນວິຊາສະເພາະ ອີກຈຳ ນວນໜຶ່ງ ໃຫ້ດ່ານກວດກາ ເມືອງຫົງສາ, ກົມຕຳຫຼວດສະກັດກັ້ນ ແລະ ຕ້ານຢາເສບ ຕິດ, ກົມຕຳຫຼວດນິຕິວິທະຍາ, ຫ້ອງການ ກວດກາ ແລະ ຄວບຄຸມຢາເສບຕິດ ເພື່ອ ໝຸນໃຊ້ເຂົ້າໃນວຽກງານວິຊາສະ ເພາະ ໃຫ້ມີຜົນສຳເລັດສູງຂຶ້ນກວ່າເກົ່າ.

ພາບ-ຂ່າວ: ຄຳໂຖ

◆ ຂ่าวพายใน · 09:42 โมง · อ่าน 22 ครั้ง

ท่าน สอมไช สีพันดอน ประทานสะพาแห่งชาด พ้อมคะนะผู้แทนขั้นสูง จะเดินทางเข้าร่อมกองประชุม (AIPA) ถั้งที 47 ที่ประเทดฟีลิบปิน อันที 16-22 พะจิก 2026



ໂດຍຕອບສະໜອງຕາມໜັງສືເຊີນ ທາງການຂອງທ່ານ ເພົາສຕິໂນ ໂບຈີ ຈີ ດີ ທີ III (Faustino "Bojie" G. Dy III) ປະທານສະພາຜູ້ແທນລາສະດອນ ແຫ່ງສາທາລະນະລັດ ຟີລິບປິນ ທັງເປັນ ປະທານກອງປະຊຸມສະມັດຊາໃຫຍ່ ລັດຖະສະພາລະຫວ່າງຊາດອາຊຽນ ຫຼື ໄອ ປາ (AIPA) ຄັ້ງທີ 47, ທ່ານ ສອນໄຊ ສີ ພັນດອນ ປະທານສະພາແຫ່ງຊາດ ແຫ່ງ ສປປລາວ ພ້ອມດ້ວຍພັນລະຍາ ແລະ ຄະນະຜູ້ແທນຂັ້ນສູງຂອງສະພາແຫ່ງ ຊາດ ແຫ່ງ ສປປລາວ.

ເຊິ່ງຈັດຂຶ້ນໃນລະຫວ່າງວັນທີ 16-22 ພະຈິກ 2026 ທີ່ນະຄອນ ຫຼວງ ມະນີລາ, ສາທາລະນະລັດ ຟີລິບປິນ.


ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ข่าวพายใน · 10:17 โมง · อ่าน 18 ถั้ง

ท่าน สะเหลิมไช กิมมะสิด นายกัลถะมันตี จะเดินทาง เข้าร่วมกองประชุมสุดยอดอาซียน ถั้งที 49 อันที 15-17 พะจิก 2026 ที่ฟิลิบปิน.



ໂດຍຕອບສະໜອງຕາມການເຊື້ອເຊີນ ຂອງ ພະນະທ່ານ ເຟີດິນານ ມາຄອດ ຈູເນຍ, ປະທານາທິບໍດີ ແຫ່ງ ສາທາລະນະລັດ ຟີລິບປິນ, ພະນະທ່ານ ສະເຫລີມໄຊ ກົມມະສິດ ນາຍົກລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະນຳພາຄະນະຜູ້ແທນຂັ້ນສູງ ຂອງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດອາຊຽນ ຄັ້ງ ທີ 49 ແລະ ກອງປະຊຸມສຸດຍອດ ທີ່ກ່ຽວຂ້ອງ ພາຍໃຕ້ຄຳ ຂວັນ: “ການນຳທາງອະນາຄົດຂອງອາຊຽນຮ່ວມກັນ” (Navigating Our Future, Together) ໂດຍການ ເປັນປະທານ ຂອງ ຟີລິບປິນ ແລະ ຈະພົບປະສອງຝ່າຍກັບ ຄູ່ຮ່ວມຕຳແໜ່ງ ຈາກບັນດາປະເທດສະມາຊິກອາຊຽນ ແລະ ຄູ່ເຈລະຈາ ຈຳນວນໜຶ່ງ ໃນວັນທີ 15-17 ພະຈິກ 2026 ທີ່ ມະນີລາ, ຟີລິບປິນ.

ຂ່າວ: ກະຊວງການຕ່າງປະເທດ

ข่าวพายใน · 10:12 โมง · อ่าน 17 ถั้ง

ท่าน ทองลุน สีสุลิด ประทานปะเทด พ้อมด้วยถะนะ จะเข้าร่วมกองประชุมสุดยอดฝรังโกโฟนี ถั้งที XX พ้อมถือโอกาดยำ้ยามยาม ลาชะอานาจัก กำปูเจย อันที 15-16 พะจิก 2026



ໂດຍຕອບສະໜອງຕາມການເຊື້ອເຊີນ ຂອງ ສົມເດັດ ໂນໂລດົມ ສີຫາໂມນີ (Norodom Sihamoni), ເຈົ້າຊີວິດ ແຫ່ງ ລາຊະອະນາຈັກ ກຳປູເຈຍ, ພະນະທ່ານ ທອງລຸນ ສີສຸລິດ, ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ຈະນຳພາຄະນະຜູ້ແທນຂັ້ນສູງຂອງ ສປປ ລາວ ເຂົ້າຮ່ວມກອງປະຊຸມສຸດຍອດຝຣັ່ງໂກໂຟນີ ຄັ້ງທີ XX (Le 20e Sommet de La Francophonie/the 20th Francophonie Summit) ແລະ ຖືໂອກາດ ຢ້ຽມຢາມ ລາຊະອານາຈັກ ກຳປູເຈຍ ໃນວັນທີ 15 - 16 ພະຈິກ 2026 ທີ່ ນະຄອນຫຼວງ ພະນົມເປັນ.

ຂ່າວ: ກະຊວງການຕ່າງປະເທດ

ຂ່າວພາຍໃນ · 15:05 ໂມງ · ອ່ານ 16 ຄັ້ງ

ມິດຕະພາບລາວ-ຣັດເຊຍ ລົງນາມເຊັນບົດບັນທຶກຮ່ວມມື ວຽກງານປ້ອງກັນຄວາມສະຫງົບພາຍໃນ ຢູ່ແຕ່ລະປະເທດ



ໃນລະຫວ່າງ ວັນທີ 10-13 ພະຈິກ 2026, ທ່ານ ພົນໂທ ວັນທອງ ກອງມະນີ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ແຫ່ງ ສປປ ລາວ ພ້ອມຄະນະ ໄດ້ເຂົ້າຮ່ວມກອງປະຊຸມສອງຝ່າຍ ກັບ ອົງການປ້ອງກັນຄວາມສະຫງົບພາຍໃນ ແຫ່ງຊາດ ສະຫະພັນຣັດເຊຍ (ສ.ຣັດເຊຍ)ທີ່ນະຄອນຫຼວງ ມົດສະກູ ສ. ຣັດເຊຍ; ສອງຝ່າຍໄດ້ລົງນາມເຊັນບົດບັນທຶກຄວາມເຂົ້າຈ່ຳດ້ວຍການຮ່ວມມື ໃນຂົງເຂດວຽກງານປ້ອງກັນຄວາມສະຫງົບພາຍໃນ ຢູ່ແຕ່ລະປະເທດ ໂດຍສະເພາະແມ່ນ ການປ້ອງກັນສະຖານທີ່ ແລະ ພື້ນຖານໂຄງລ່າງທີ່ມີຄວາມສຳຄັນທາງຍຸດທະສາດ, ປ້ອງກັນກອງປະຊຸມ ແລະ ງານສາກົນຕ່າງໆ, ການປ້ອງກັນແຂກຕ່າງປະເທດຂັ້ນສູງ ແລະອື່ນໆ.

ໃນໂອກາດເດີນທາງມາຢ້ຽມຢາມ ແລະ ເຮັດວຽກຢ່ຽ ສ.ຣັດເຊຍ ໃນຄັ້ງນີ້ ທ່ານລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ພົບ ປະໂອ້ລົມ ນາຍ ແລະ ພົນຕຳຫຼວດທີ່ກຳລັງສຶກສາ ຢ່ ນະຄອນມົດສະກູ ເຊິ່ງທ່ານໄດ້ເນັ້ນໃຫ້ນາຍ ແລະ ພົນຕຳ ຫຼວດດັ່ງກ່າວ ເອົາໃຈໃສ່ສຶກສາຮ່ຳຮຽນຍາດແຍ່ງເອົາຄວາມຮູ້ ເພື່ອນຳໄປໝຸນໃຊ້ເຂົ້າໃນວຽກງານຂອງກຳລັງປ້ອງກັນຄວາມສະຫງົບ ຢ່ ສປປ ລາວ, ຍົກສູງຄວາມຮັບ ຜິດຊອບການເມືອງ, ເອົາໃຈໃສ່ປະຕິບັດລະບຽບວິໄນຂອງສະຖານບັນການສຶກສາ ກໍຄື ລະບຽບຂອງ ກຳລັງ, ມີຄວາມສາມັກຄີຮັກແພງ ຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຮ່ຳຮຽນໃຫ້ສຳເລັດຕາມໂຄງການຫຼັກສູດທີ່ກຳນົດໄວ້.

ໃນໂອກາດດຽວກັນນີ້, ທ່ານ ລັດຖະມົນຕີ ພ້ອມຄະ ນະ ກໍໄດ້ໄປຢ້ຽມຢາມ ແລະ ທັດສະນະສຶກສາ ຢູ່ສູນ ຝຶກວິຊາສະເພາະ ແລະ ຢ້ຽມຊົມອາວຸດ ແລະ ອຸປະກອນພິ ເສດ ຮັບໃຊ້ວຽກງານ ປ້ອງກັນຄວາມປອດໄພຫຼາຍປະເພດ ລວມ ທັງການຝຶກ ແລະ ນຳໃຊ້ສັດວິຊາສະເພາະ ເຊິ່ງເຫັນວ່າ ເປັນປະໂຫຍດຫຼາຍ ແລະ ສາມາດນຳມາໝຸນໃຊ້ ໃນວຽກງານ ປ້ອງກັນຄວາມສະຫງົບ ຂອງ ສປປ ລາວ.

ຂ່າວ: ຄວາມສະຫງົບ

ຂ່າວພາຍໃນ · 13:28 ໂມງ · ອ່ານ 16 ຄັ້ງ

ກອງປະຊຸມສະຫຼຸບວຽກງານ ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ປະຈຳປີ 2026



ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ (ຄຄອຊ) ຈັດກອງປະຊຸມ ສະຫລຸບວຽກງານ ປະຈຳປີ 2026 ແລະ ວາງທິດທາງແຜນການ ປະຈຳປີ 2027 ໃນ ວັນທີ 13 ພະຈິກ 2026 ຢ່ ກົມໃຫຍ່ການເມືອງ ກອງທັບ ໂດຍການເປັນປະທານຂອງ ສະຫາຍ ພົນເອກ ຄຳລຽງ ອຸທະໄກສອນ ກຳມະການກົມການເມືອງສູນກາງ ພັກ, ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງ ປ້ອງກັນປະ ເທດ, ປະທານຄະນະກຳມະການຄຸ້ມຄອງອິນ ເຕີເນັດແຫ່ງຊາດ, ມີ ທ່ານລັດຖະມົນຕີ ກະຊວງເຕັກໂນ ໂລຊີ ແລະ ການສື່ສານ, ຮອງປະທານ, ຜູ້ປະຈຳການ ຄະນະກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ, ມີບັນດາ ຮອງລັດຖະມົນຕີ, ປະທານ-ຮອງປະທານຄະນະກຳມະ ການປົກຄອງແຂວງ, ນະຄອນຫລວງວຽງຈັນ, ຕາງໜ້າ ຈາກບັນດາກະຊວງ, ອົງການທຽບເທົ່າ ແລະ ຄຄອຊ ຢ່ ສູນກາງ, ກົມ, ຫ້ອງວ່າການ, ພະແນກການ, ອົງການ ປົກຄອງທ້ອງຖິ່ນ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງ ມະຫາຊົນ ເຂົ້າຮ່ວມ.

ໃນກອງປະຊຸມ ທ່ານ ມົນໄຊ ພິລາວົງ ຫົວໜ້າສູນອິນເຕີເນັດແຫ່ງຊາດ ກະຊວງເຕັກໂນໂລຊີ ແລະ ການສື່ສານ, ທັງເປັນຫົວໜ້າກອງເລຂາ ຄະນະ ກຳມະການຄຸ້ມຄອງອິນເຕີເນັດແຫ່ງຊາດ ໄດ້ຜ່ານບົດສະຫລຸບການເຄື່ອນໄຫວ ວຽກງານ ຄຄອຊ ປະຈຳປີ 2026 ແລະ ທິດທາງແຜນການ ປະຈຳປີ 2027 ໂດຍ ໄດ້ຍົກໃຫ້ເຫັນຜົນສຳເລັດຫລາຍດ້ານ ທີ່ ຕິດພັນກັບການຄຸ້ມຄອງ, ການພັດທະນາ ແລະ ການນຳໃຊ້ອິນເຕີເນັດ, ເຕັກໂນໂລຊີ ການສື່ສານ, ຂໍ້ມູນຂ່າວສານ, ການ ພັດທະນາຂົງເຂດດັ່ງກ່າວ ເຂົ້າໃນການ ຈັດຕັ້ງປະຕິບັດວຽກງານ, ການດຳເນີນ ທຸລະກິດ, ການດຳລົງຊີວິດ, ການຕິດຕໍ່ ພົວພັນກັບສັງ ຄົມຕ່າງໆ ຍັ່ງເຫັນໄດ້ແຈ້ງ ເຖິງຄວາມສຳຄັນ ແລະ ຄວາມຈຳເປັນ ຂອງອິນເຕີເນັດ. ຄຽງຄູ່ກັບຜົນ ປະໂຫຍດ ອັນມະຫາສານຈາກອິນເຕີເນັດ, ພວກເຮົາ ໄດ້ເຫັນແຈ້ງເຖິງບັນຫາ ແລະ ສິ່ງທ້າທາຍ ຕ່າງໆ ໂດຍສະເພາະ ແມ່ນການນຳໃຊ້ສື່ ສັງຄົມອອນລາຍ ແລະ ການນຳໃຊ້ອິນເຕີ ເນັດ ໄປໃນທາງທີ່ບໍ່ດີ ຊຶ່ງ ຄຄອຊ ໄດ້ຊີ້ນຳ ພາກສ່ວນກ່ຽວຂ້ອງ ສຸມໃສ່ຄົ້ນຄວ້າຫາ ວິທີການແກ້ໄຂ ດ້ວຍມາດຕະການຕ່າງໆ ເພື່ອແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນ.

ພ້ອມນີ້, ກອງປະຊຸມຍັງໄດ້ຮັບຟັງ ລາຍງານຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດ ວຽກງານຄຸ້ມຄອງທາງສຽງບໍ່ດີ ໃນສື່ສັງຄົມ ອອນລາຍ ປະຈຳປີ 2026, ບັນຫາຄົງຄ້າງ, ສິ່ງທ້າທາຍຕ່າງໆ ແລະ ທິດທາງແຜນການ ປະຈຳປີ 2027; ລາຍງານການຈັດຕັ້ງ ປະຕິບັດວຽກງານດ້ານການຫລອກລວງ ທາງອອນລາຍ ທີ່ຂຶ້ນກັບຄະນະກຳມະການ ຄຸ້ມຄອງອິນເຕີເນັດແຫ່ງຊາດ ຊຶ່ງຄະນະ ຮັບຜິດຊອບ ໄດ້ເຮັດວຽກຮ່ວມກັນຫລາຍ ຄັ້ງ ເພື່ອຄົ້ນຄວ້າວິທີການ ແລະ ຊີ້ນຳ ໃຫ້ ພາກສ່ວນຜູ້ໃຫ້ບໍລິການໂທລະ ຄົມມະນາຄົມ, ບັນດາທະນາຄານ, ທຸລະກິດ ແລະ ສື່ມວນຊົນສຳນັກຕ່າງໆ ເຜີຍແຜ່ຕໍ່ສັງຄົມ ເພື່ອເປັນການສ້າງຈິດ ສຳນຶກ ແລະ ສະຕິລະມັດລະວັງຕົວ ເຮັດ ໃຫ້ປະຊາຊົນ ໄດ້ມີຄວາມເຂົ້າໃຈຫລາຍ ຂຶ້ນ ສາມາດຫລຸດ ຜ່ອນການຫລົງເຊື່ອຕໍ່ ຮູບແບບການຫລອກລວງສໍ້ໂກງ ເປັນກ້າວ ໆມາ; ຮັບຟັງການລາຍງານ ສະພາບການ ພົ້ນເດັ່ນທີ່ເກີດຂຶ້ນ ຈາກສື່ສັງຄົມອອນ ລາຍ, ພ້ອມທັງວິທີການແກ້ໄຂບັນຫາ ຂອງ ບັນດາກະຊວງ, ອົງການ, ແຂວງ, ນະຄອນຫລວງ ແລະ ຮ່ວມກັນປະກອບ ຄຳເຫັນ ຢ່າງກົງໄປກົງມາ ເພື່ອຕີລາຄາ ແລະ ຖອດຖອນບົດຮຽນ ຈາກການ ຈັດຕັ້ງປະຕິບັດວຽກງານໃນໄລຍະຜ່ານມາ ແລະ ຮ່ວມກັນວາງທິດທາງແຜນການໃນຕໍ່

ຕໍ່ໜ້າ 7

ກອງປະຊຸມສະຫຼຸບວຽກງານ ຄະນະກຳມະການຄຸ້ມຄອງອິນເຕີເນັ... (ຕໍ່ຈາກໜ້າ 6)

ໜ້າ ເພື່ອເຮັດໃຫ້ວຽກງານການຄຸ້ມຄອງອິນເຕີເນັດ ພາຍໃນປະເທດ ມີປະສິດທິພາບ ແລະ ປະສິດທິຜົນ ດີຂຶ້ນກວ່າເກົ່າ.

ໂອກາດນີ້, ສະຫາຍ ພົນເອກ ຄຳລຽງ ອຸທະໄກສອນ ໄດ້ມີຄຳເຫັນຊີ້ນຳ ຕໍ່ກັບການສະຫລຸບລາຍງານ, ທິດທາງແຜນການ ແລະ ຂໍ້ສະເໜີຕ່າງໆ ໃນການຈັດຕັ້ງປະຕິບັດບັນດາວຽກງານໃນຕໍ່ໜ້າ ໂດຍໄດ້ຕີລາຄາສູງ ຕໍ່ການຄົ້ນຄວ້າ, ການກຳນົດບັນດາເປົ້າໝາຍທີ່ມີຄວາມສຳຄັນ ແລະ ຈຳເປັນ ທີ່ຈະຕ້ອງຄຸ້ມຄອງ ແລະ ພັດທະນາວຽກງານອິນເຕີເນັດ ຊຶ່ງເປັນວຽກງານຂອງທຸກໆພາກສ່ວນ ທີ່ຈະຕ້ອງໄດ້ສົມທົບກັນຢ່າງແໜ້ນແຟ້ນ ແລະ ກົມກຽວ ເພື່ອເຮັດໃຫ້ອິນເຕີເນັດ ແລະ ເຕັກໂນໂລຊີດິຈິຕອນ ສາມາດປະກອບສ່ວນ ໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ພ້ອມທັງຊຸກຍູ້ການຫັນເປັນດິຈິຕອນ ຂອງປະເທດເຮົາ.

ຂ່າວ: ອານຸສອນ ສົມວົງສາ

◆ ຂ່າວພາຍໃນ · 10:19 ໂມງ · ອ່ານ 11 ຄັ້ງ

ນາຍົກລັດຖະມົນຕີ ຕ້ອນຮັບອາສາສະໝັກຍີ່ປຸ່ນ



ໃນໂອກາດນີ້, ທ່ານນາຍົກລັດຖະມົນຕີ ໄດ້ກ່າວສະແດງຄວາມຍິນດີຕ້ອນຮັບ ແລະ ຕີລາຄາສູງຕໍ່ການພົວພັນຮ່ວມມືຂອງສອງປະເທດບົນພື້ນຖານຂອບ “ການເປັນຄູ່ຮ່ວມຍຸດທະສາດຮອບດ້ານ” ແລະ ສາຍພົວພັນມິດຕະພາບອັນແໜ້ນແກ່ນ ໂດຍສະເພາະ ແມ່ນການປະຕິບັດໜ້າທີ່ຂອງອາສາສະໝັກຍີ່ປຸ່ນ ຢູ່ ສປປ ລາວ ຊຶ່ງໄດ້ປະກອບສ່ວນສຳຄັນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ, ການພັດທະນາຊົນນະບົດລຶບລ້າງຄວາມທຸກຍາກ ຂອງປະຊາຊົນ ຕະຫລອດໄລຍະ 60 ປີທີ່ຜ່ານມາ, ເຮັດໃຫ້ໄມຕີຈິດມິດຕະພາບ, ຄວາມສາມັກຄີຮັກແພງ ແລະ ໝາກຜົນຂອງການຮ່ວມມື ທັງລັດຖະບານ ແລະ ປະຊາຊົນ ສອງປະເທດນັບມື້ແໜ້ນແຟ້ນ ແລະ ເກີດດອກອອກຜົນເປັນກ້າວໆ. ພ້ອມນັ້ນ, ທ່ານນາຍົກລັດຖະມົນຕີ ຕາງໜ້າໃຫ້ລັດຖະບານ ແລະ ປະຊາຊົນລາວໄດ້ສະແດງຄວາມ ຂອບໃຈ ແລະ ຮູ້ບຸນຄຸນຕໍ່ລັດຖະບານ ແລະ ປະຊາຊົນຍີ່ປຸ່ນທີ່ໄດ້ໃຫ້ການຊ່ວຍເຫລືອຢ່າງມີປະສິດທິຜົນ ໃນຂົງເຂດກະສິກຳ, ການພັດທະນາຊົນນະບົດ, ສາທາລະນະສຸກ, ການສຶກສາ, ແລະ ຂົງເຂດອື່ນໆຊຶ່ງການຊ່ວຍເຫລືອດັ່ງກ່າວ ໄດ້ກາຍເປັນທ່າແຮງອັນສຳຄັນ ໃຫ້ແກ່ການສ້າງສາພັດທະນາ ສປປ ລາວ ຢ່າງແທ້ຈິງ, ທັງສ້າງການໂອກາດໃຫ້ປະຊາຊົນທັງສອງຊາດ ລາວ-ຍີ່ປຸ່ນ ສາມາດເຂົ້າໃຈທາງດ້ານພາສາ, ວັດທະນະທຳ, ອັດຖະນະທຳ, ອັດຖະນະທຳ, ອັດຖ

◆ ເສດຖະກິດ-ສັງຄົມ · 11:18 ໂມງ · ອ່ານ 21 ຄັ້ງ

ໂຄງການເຊື່ອມຕໍ່ສາຍສົ່ງໄຟຟ້າ 500 ກວ ລາວ-ຈີນ ປູພື້ນຖານໃຫ້ລາວ ກ້າວສູ່ການເປັນສູນກາງພະລັງງານສະອາດ



ທ່ານ ສຸລິວັນ ທຳມະວົງ ຮອງຜູ້ອຳນວຍການ ບໍລິສັດ ສາຍສົ່ງໄຟຟ້າແຫ່ງຊາດລາວ ຈຳກັດ (EDL-T) ໄດ້ໃຫ້ສຳພາດຕໍ່ສື່ມວນຊົນເມື່ອບໍ່ດົນມານີ້ວ່າ: ໂຄງການເຊື່ອມຕໍ່ສາຍສົ່ງໄຟຟ້າ 500 ກິໂລໂອນ ລາວ-ຈີນ ເປັນບາດກ້າວສຳຄັນທາງຍຸດທະສາດໃນການພັດທະນາຂະແໜງພະລັງງານຂອງ ສປປ ລາວ ຊຶ່ງບໍ່ພຽງແຕ່ຊ່ວຍເພີ່ມຂີດຄວາມສາມາດໃນການສົ່ງໄຟຟ້າຂ້າມແດນ, ແຕ່ຍັງຊ່ວຍຍົກລະ ດັບຄວາມໝັ້ນຄົງດ້ານການສະໜອງໄຟຟ້າ, ສ້າງລາຍຮັບເຂົ້າປະເທດ, ຖ່າຍທອດເຕັກໂນໂລຊີ ແລະ ພັດທະນາບຸກຄະລາກອນໃນ ສປປ ລາວ ໃຫ້ມີຄວາມສາມາດໃນການຄຸ້ມຄອງລະບົບຕາໜ່າງໄຟຟ້າ ແຮງສູງດ້ວຍຕົນເອງ.

ໂຄງການເຊື່ອມຕໍ່ສາຍສົ່ງໄຟຟ້າ 500 ກິໂລໂອນ ລາວ-ຈີນ ເປັນຂໍ້ຕໍ່ກະດູກສັນຫຼັງທຳອິດ ທີ່ປູພື້ນຖານໃຫ້ ສປປ ລາວ ກ້າວສູ່ການເປັນສູນກາງພະລັງງານສະອາດຂອງພາກພື້ນ ແລະ ເປັນການຫັນປ່ຽນແຫຼ່ງພະລັງງານສະອາດສີຂຽວ ໃຫ້ກາຍເປັນທຶນຮອນ ເພື່ອສ້າງພະລັງຂັບເຄື່ອນໃໝ່ ໃຫ້ແກ່ເສດຖະກິດແຫ່ງຊາດ ໄປພ້ອມກັບການເຕີບໂຕແບບຍືນຍົງຂອງພາກພື້ນ, ໃນໄລຍະຜ່ານມາ ສປປ ລາວ ມີທ່າແຮງຜະລິດໄຟຟ້າຈາກພະລັງງານນ້ຳຕົກຢ່າງມະຫາສານ ແຕ່ຍັງປະເຊີນຂໍ້ຈຳກັດດ້ານລະບົບ ສາຍສົ່ງໄຟຟ້າເຮັດໃຫ້ບາງໄລຍະມີໄຟຟ້າເຫຼືອໃຊ້ໃນລະດູຝົນ (ໃນລະດູຝົນສາມາດຜະລິດໄຟຟ້າໄດ້ເກີນຄວາມຕ້ອງການແຕ່ຕ້ອງປ່ອຍຖິ້ມ ຫຼາຍເຖິງ 800 ລ້ານກິໂລວັດໂມງ ເນື່ອງຈາກບໍ່ມີຊ່ອງທາງສົ່ງ ອອກ, ແຕ່ກັບຂາດແຄນໃນລະດູແລ້ງ. ການມີລະບົບສາຍສົ່ງ 500 kV ຈຶ່ງເປັນກົນໄກສຳຄັນໃນການແກ້ໄຂບັນຫາດັ່ງກ່າວ ຊຶ່ງນັບແຕ່ວັນທີ 20 ເມສາ 2026 ເປັນຕົ້ນມາ ໂຄງການດັ່ງກ່າວ ສາມາດຍົກລະດັບຂີດຄວາມສາມາດການສົ່ງໄຟຟ້າຈາກ 50 MW ເປັນ 1.500 MW ຫຼື ເພີ່ມຂຶ້ນ 30 ເທົ່າ ແລະ ເປີດໂອກາດສົ່ງອອກພະລັງງານສະອາດໄດ້ສູງສຸດ 3 ຕື້ກິໂລວັດໂມງຕໍ່ປີ. ຈຸດເດັ່ນຂອງໂຄງການແມ່ນການສ້າງລະບົບຊື້-ຂາຍໄຟຟ້າສອງທິດທາງ ໂດຍໃນລະດູຝົນ ສາມາດສົ່ງ ອອກໄຟຟ້າສ່ວນເກີນ ເພື່ອສ້າງລາຍຮັບເງິນຕາ, ໃນຂະນະທີ່ໃນລະດູແລ້ງ ກໍສາມາດນຳເຂົ້າໄຟຟ້າຈາກ ສປ ຈີນ ມາຊ່ວຍເສີມຄວາມຕ້ອງການພາຍໃນ ເພື່ອຮັບປະກັນການສະໜອງໄຟຟ້າໃຫ້ແກ່ ປະຊາຊົນ, ໂຮງງານ, ໂຮງໝໍ ແລະ ໂຮງຮຽນ ແລະ ອື່ນໆ.

ທ່ານຮອງຜູ້ອຳນວຍການ ບໍລິສັດ ສາຍສົ່ງໄຟຟ້າແຫ່ງຊາດລາວ ຈຳກັດ ຍັງໄດ້ຍົກຕົວເລກການ ສົ່ງອອກ ແລະ ລາຍຮັບຕົວຈິງ ຊຶ່ງປະກອບມີ ປະລິມານໄຟຟ້າຈາກເຂື່ອນນ້ຳອູ 5, 6 ແລະ 7 ປະມານ 600 ລ້ານ kWh ຖືກສົ່ງໂດຍກົງໄປເຂດອ່າວໃຫຍ່ຂອງຈີນ ລວມມີ ກວາງຕຸ້ງ, ຮົງກົງ ແລະ ມາເກົ๊າ; ພະລັງງານແສງຕາເວັນ ຄາດວ່າຈະສົ່ງອອກ ຂ້າມແດນ ໄດ້ເຖິງ 1.1 ຕື້ kWh ຕໍ່ປີ. ນອກນັ້ນ, ຍັງມີໂຄງການໂຊລາຟາມເທິງພູອີກ 1.000 MW ທີ່ກຳລັງກະກຽມພັດທະນາ.ດ້ານການພັດທະນາຊັບ ພະຍາກອນມະນຸດ EDL-T ໄດ້ຮ່ວມກັບ EDL ດຳເນີນໂຄງການຝຶກອົບຮົມຊ່ຳງຝີມືດ້ານສາຍສົ່ງ ແລະ ແປງໄຟຟ້າ ລາວ-ຈີນ ຜ່ານມາແລ້ວ 7 ຊຸດ, ມີຜູ້ຜ່ານການຝຶກອົບຮົມ 84 ຄົນ.ນອກນັ້ນ, ຍັງມີການຈັດຝຶກອົບຮົມດ້ານການບໍລິຫານ, ການບຳລຸງຮັກສາ ແລະ ເຕັກໂນໂລຊີໂດຣນ ຫຼາຍກວ່າ 80 ຄັ້ງ, ມີຜູ້ເຂົ້າຮ່ວມຫຼາຍກວ່າ 2,000 ເທື່ອຄົນ, ພ້ອມນີ້ຍັງໄດ້ນຳໃຊ້ຮູບແບບຝຶກອົບຮົມວິສະວະກອນໜຸ່ມ ແບບ 2+2+2 ຊຶ່ງປະກອບມີການຮຽນພາສາຈີນ 2 ເດືອນ, ຮຽນທິດສະດີ ແລະ ປະຕິບັດ 2 ເດືອນ ແລະ ລົງໜ້າວຽກຕົວຈິງອີກ 2 ເດືອນ ສາມາດພັດທະນາພະນັກງານຫຼັກແຫຼ່ງດ້ານເຕັກນິກທ້ອງຖິ่ນໄດ້ 171 ຄົນ. ຂະນະທີ່ໃນໄລຍະປີ 2010-2026 ກໍໄດ້ມອບທຶນການສຶກສາໃຫ້ນັກສຶກສາລາວໄປສຶກສາຕໍ່ຢູ່ປະເທດຈີນ 81 ຄົນ. ໃນນັ້ນ, ຈົບການສຶກສາແລ້ວ 53 ຄົນ, ສ່ວນດ້ານການປົກປັກຮັກສາສິ่ງ ແວດລ້ອມ ໂຄງການໄດ້ໃຫ້ຄວາມສຳຄັນຕໍ່ການຫຼຸດຜ່ອນຜົນກະທົບຕໍ່ປ່າໄມ້ ແລະ ຊຸມຊົນ ໂດຍການປັບ ແລວສາຍສົ່ງ ແລະ ນຳໃຊ້ເຕັກນິກຍົກເສົາສູງ ເພື່ອຫຼຸດການຕັດໄມ້, ສາມາດຮັກສາເນື້ອທີ่ປ່າໄມ້ໄດ້ 170,4 ເຮັກຕາ ແລະ ຫຼຸດຄວາມກວ້າງຂອງແລວຕັດໄມ້ຈາກ 70 ແມັດ ເຫຼືອປະມານ 22 ແມັດ ພ້ອມທັງດຳເນີນການກວດກູ້ລູກລະເບີດບໍ່ທັນແຕກ (UXO) ຕາມແນວສາຍສົ่ງ ເພື່ອຮັບປະກັນຄວາມ ປອດໄພໃນການກໍ່ສ້າງ ແລະ ຊຸມຊົນທ້ອງຖິ่ນ. ພ້ອມກັນນັ້ນ, ໂຄງການຍັງໄດ້ສ້າງວຽກເຮັດງານທຳໃຫ້ແກ່ແຮງງານທ້ອງຖິ่ນ, ປັບປຸງໂຮງຮຽນ, ສ້າງຫ້ອງອ່ານ ແລະ ມອບທຶນການສຶກສາໃຫ້ນັກຮຽນ-ນັກສຶກສາລາວ ຊຶ่ງສະທ້ອນໃຫ້ເຫັນເຖິງຄວາມຮັບຜິດຊອບຕໍ່ສັງຄົມຂອງໂຄງການ,ສຳລັບທິດທາງໃນຕໍ่ໜ້າ EDL-T ຈະສືບຕໍ່ຮ່ວມມືກັບພາກສ່ວນທີ่ກ່ຽວຂ້ອງ ເພື່ອພັດທະນາຕາໜ່າງໄຟຟ້າຫຼັກໃຫ້ເຊື່ອມຈອດ ທົ่ວປະເທດ, ສົ่ງເສີມການປະສານພະລັງງານນ້ຳຕົກ, ແສງຕາເວັນ ແລະ ລົມ, ພັດທະນາລະບົບການຄ້າໄຟຟ້າກັບປະເທດໃນພາກພື้ນ ແລະ ສ້າງບຸກຄະລາກອນວິສະວະກອນລາວໃຫ້ມີຄວາມຊຳນານສູງຂຶ้ນ.

ທ່ານຮອງຜູ້ອຳນວຍການຍັງໄດ້ຢືນຢັນວ່າ: ໂຄງການໄຟຟ້າ 500 kV ລາວ-ຈີນ ບໍ่ແມ່ນພຽງແຕ່ໂຄງ ການສາຍສົ่ງໄຟຟ້າຂ້າມແດນ ແຕ່ເປັນພື้ນຖານສຳຄັນໃນການສ້າງຄວາມໝັ້ນຄົງດ້ານພະລັງງານ, ສ້າງ ມູນຄ່າທາງເສດຖະກິດ, ຍົກລະດັບທັກສະຂອງຄົນລາວ ແລະ ສົ่ງເສີມການຮ່ວມມື ລາວ-ຈີນ ໃຫ້ເຕີບ ໂຕຢ່າງຍືນຍົງ. ໂຄງການນີ້, ເປັນຂົວເຊື່ອມຕໍ່ພະລັງງານ, ເຕັກໂນໂລຊີ, ຄວາມຮູ້ ແລະ ໂອກາດການພັດທະນາລະຫວ່າງ ລາວ-ຈີນ ເພື່ອກ້າວໄປສ่ູອະນາຄົດພະລັງງານທີ่ໝັ้ນຄົງ ແລະ ຍືນຍົງ.

(ແຫຼ่ງຂ่າວ: EDL-T)

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ເສດຖະກິດ-ສັງຄົມ · 15:28 ໂມງ · ອ່ານ 18 ຄັ້ງ

ເຈົ້າໜ້າທີ່ກວດກາການຄ້າ ເມືອງຈຳພອນ ລົງຕິດຕາມລາຄານ້ຳມັນເຊື້ອໄຟ ຫຼັງມີການປັບລາຄາລົງໃໝ່



ໃນວັນທີ 12 ພະຈິກ 2026, ເຈົ້າໜ້າທີ່ກວດກາການຄ້າ ເມືອງຈຳພອນ ແຂວງສະຫວັນນະເຂດ ໄດ້ລົງເຄື່ອນໄຫວຕິດຕາມ ແລະ ກວດກາການຈຳໜ່າຍນ້ຳມັນເຊື້ອໄຟຢູ່ບັນດາປ້ຳນ້ຳມັນພາຍໃນເມືອງ ໂດຍອີງຕາມແຈ້ງການຂອງກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 2159/ກຄພນ ລົງວັນທີ 11 ພະຈິກ 2026 ວ່າດ້ວຍການປັບລົງລາຄາຂາຍຍ່ອຍນ້ຳມັນເຊື້ອໄຟ.

ອັດຕາລາຄານ້ຳມັນເຊື້ອໄຟສະບັບໃໝ່ ມີລາຍລະອຽດດັ່ງນີ້:

ເຂດຫຼັກ 35:

ນ້ຳມັນແອັດຊັ່ງທຳມະດາ: 32,330 ກີບ/ລິດ

ນ້ຳມັນກາຊວມ: 32,400 ກີບ/ລິດ

ເຂດແກ້ງກອກ:

ນ້ຳມັນແອັດຊັ່ງທຳມະດາ: 32,410 ກີບ/ລິດ

ນ້ຳມັນກາຊວມ: 32,480 ກີບ/ລິດ

ການລົງກວດກາໃນຄັ້ງນີ້ ແມ່ນເພື່ອສະກັດກັ້ນການສວຍໂອກາດຂຶ້ນລາຄາ ຫຼື ຂາຍນ້ຳມັນເກີນລາຄາທີ່ລັດກຳນົດ ແລະ ເພື່ອໃຫ້ຜູ້ປະກອບການປ້ຳນ້ຳມັນປະຕິບັດຕາມແຈ້ງການແຕ່ລະໄລຍະຢ່າງເຂັ້ມງວດ ໂດຍສະເພາະແມ່ນດຳລັດວ່າດ້ວຍທຸລະກິດນ້ຳມັນເຊື້ອໄຟ ສະບັບເລກທີ 559/ລບ.

ທີ່ ມ າ : Padalack Vongphanit

ເສດຖະກິດ-ສັງຄົມ · 14:33 ໂມງ · ອ່ານ 16 ຄັ້ງ

ກຽມເປີດເກັບຄ່າຜ່ານທາງຫຼວງ ເລກ 9 ແຂວງສະຫວັນນະເຂດ ເລີ່ມວັນທີ 16 ພະຈິກ 2026 (ສະເພາະລົດນ້ຳໜັກ 12 ໂຕນຂຶ້ນໄປ)



ເສັ້ນທາງຫຼວງແຫ່ງຊາດ ເລກ 9 ແຂວງສະຫວັນນະເຂດ ກຽມເປີດໃຫ້ບໍລິການເກັບຄ່າຜ່ານທາງຢ່າງເປັນທາງການ ນັບແຕ່ວັນທີ 16 ພະຈິກ 2026 ເປັນຕົ້ນໄປ ໂດຍຈະເກັບສະເພາະລົດຂົນສົ່ງສິນຄ້າ ແລະ ລົດໂດຍສານທີ່ມີນ້ຳໜັກລວມ 12 ໂຕນຂຶ້ນໄປ ເພື່ອນຳເງິນປະມານມາບຳລຸງຮັກສາເສັ້ນທາງໃຫ້ໄດ້ມາດຕະຖານ ແລະ ຍືນຍົງ.

ເສັ້ນທາງເລກ 9 ຖືເປັນເສັ້ນເລືອດໃຫຍ່ທາງເສດຖະກິດທີ່ເຊື່ອມໂຍງການຄ້າ ແລະ ການຂົນສົ່ງລະຫວ່າງ ໄທ - ລາວ - ຫວຽດນາມ. ແຕ່ລະວັນມີລົດບັນທຸກໜັກສັນຈອນຈຳນວນຫຼາຍ ເຮັດໃຫ້ເສັ້ນທາງຊຸດໂຊມໄວກ່ອນກຳນົດ ແລະ ຕ້ອງໃຊ້ງົບປະມານມະຫາສານໃນການສ້ອມແປງ. ດັ່ງນັ້ນ, ອີງຕາມມະຕິຂອງສະພາແຫ່ງຊາດ ເລກທີ 165/ສພຊ (ລົງວັນທີ 26 ມິຖຸນາ 2025) ແລະ ມະຕິຂອງລັດຖະບານ ເລກທີ 10/ລບ (ລົງວັນທີ 01 ກັນຍາ 2025), ພາກລັດຈຶ່ງໄດ້ນຳໃຊ້ລະບົບການເກັບຄ່າຜ່ານທາງແບບດິຈິຕອນ (ຈ່າຍຜ່ານລະບົບທະນາຄານ ຕາມນ້ຳໜັກ ແລະ ໄລຍະທາງຕົວຈິງ).

ຜົນປະໂຫຍດທີ່ຈະໄດ້ຮັບຈາກການເກັບຄ່າຜ່ານທາງ:

ສຳລັບຜູ້ປະກອບການຂົນສົ່ງ: ເສັ້ນທາງທີ່ຮາບພຽງ ແລະ ໄດ້ມາດຕະຖານ ຈະຊ່ວຍປະຢັດຄ່າສ້ອມແປງອາໄຫຼ່, ຢາງລົດ, ຫຼຸດການສິ້ນເປືອງນ້ຳມັນ ແລະ ຫຼຸດໄລຍະເວລາໃນການເດີນທາງ ເຮັດໃຫ້ຂົນສົ່ງສິນຄ້າໄດ້ຫຼາຍຮອບຂຶ້ນ.

ສຳລັບຄວາມປອດໄພຂອງປະຊາຊົນ: ຫຼຸດຜ່ອນອຸບັດຕິເຫດທີ່ເກີດຈາກເສັ້ນທາງເປ່ເພ ແລະ ຊ່ວຍໃຫ້ການສັນຈອນໄປມາສະດວກສະບາຍຕະຫຼອດ 24 ຊົ່ວໂມງ.

ສຳລັບ ເສດຖະກິດ ແລະ

ຕໍ່ໜ້າ 10

ກຽມເປີດເກັບຄ່າຜ່ານທາງຫຼວງ ເລກ 9 ແຂວງສະຫວັນນະເຂດ ... (ຕໍ່ຈາກໜ້າ 9)

ປະເທດຊາດ: ຊຸກຍູ້ການຄ້າ, ການທ່ອງທ່ຽວ ແລະ ການລົງທຶນໃຫ້ຂະຫຍາຍຕົວ. ລາຍຮັບທັງໝົດຈະຖືກໂອນເຂົ້າບັນຊີສະເພາະຂອງງົບປະມານແຫ່ງລັດຢ່າງໂປ່ງໃສ ເພື່ອນຳມາໝູນໃຊ້ບຳລຸງຮັກສາເສັ້ນທາງເສັ້ນນີ້ໂດຍກົງ.

ພາກສ່ວນກ່ຽວຂ້ອງຈຶ່ງຂໍຄວາມຮ່ວມມືມາຍັງຜູ້ປະກອບການຂົນສົ່ງ ແລະ ຜູ້ໃຊ້ລົດໃຊ້ຖະໜົນທຸກທ່ານ ຮ່ວມກັນສະໜັບສະໜຸນນະໂຍບາຍດັ່ງກ່າວ ເພື່ອສ້າງເສັ້ນທາງທີ່ໝັ້ນຄົງ ແລະ ປອດໄພໃຫ້ແກ່ປະເທດຊາດສືບຕໍ່ໄປ.

ທາກະຊອງການເງິນ

◆ ເສດຖະກິດ-ສັງຄົມ · 11:49 ໂມງ · ອ່ານ 9 ຄັ້ງ

ບຸນນະມັດສະການພະທາດຫຼວງວຽງຈັນ ປະຈຳປີ 2026ຈະຈັດຂຶ້ນ 20-24 ພະຈິກນີ້



ທ່ານ ນາງ ວິໄລວອນ ຈັນທະລາຕີ ຮອງປະທານຄະນະກຳມະການປົກຄອງນະຄອນຫຼວງວຽງຈັນ ໄດ້ໃຫ້ຮູ້ກ່ຽວກັບການຈັດບຸນດັ່ງກ່າວ ໃນພິທີຖະແຫຼງຂ່າວ ໃນວັນທີ 11 ພະຈິກ 2026 ນີ້ວ່າ: ບຸນນະມັດສະການພະທາດຫຼວງວຽງຈັນ ແລະ ງານວາງສະແດງສິນຄ້າໃນປີນີ້ ຈະເລີ່ມແຕ່ວັນທີ 20-24 ພະຈິກ 2026 ໂດຍຈະຈັດກິດຈະກຳຕ່າງໆທາງສາສະໜາ ເປັນຕົ້ນ ໃນວັນທີ 20 ພະຈິກ 2026 ເວລາ 16:30 ໂມງ ຈະຈັດພິທີເປີດບຸນ ນະມັດສະການພະທາດຫຼວງວຽງຈັນ ຢ່າງເປັນທາງການ; ວັນທີ 21 ພະຈິກ ເວລາ 16:30 ໂມງ ສືບຕໍ່ຄືບຸນຕາມປະເພນີ; ວັນທີ 22 ພະຈິກ, ກົງກັບຂຶ້ນ 13 ຄ่ำ ເດືອນ 12 ປີ 2569 ເວລາ 16:00 ໂມງ ພິທີສູດປະລິຕະມຸງຄຸນ ທີ່ພະທາດຫຼວງ; ວັນທີ 23 ພະຈິກ, ເວລາ 13:30 ໂມງ ຈະມີພິທີແຫ່ພະສາດເຜິ້ງ ແລະ ວັນທີ 24 ພະຈິກ ມື້ສຸດທ້າຍ ກົງກັບຂຶ້ນ 15 ຄ่ำ ເດືອນ 12 ປີ 2569 ເວລາ 07:00 ໂມງ ຈະມີພິທີໃສ່ບາດຖວາຍສັງຄະທານ, ເວລາ 13:00 ໂມງ ພິທີແຫ່ລູກຄີ ແລະ ແຂ່ງຂັນກິລາພື້ນບ້ານຕີຄີ. ສ່ວນຕອນແລງ ເວລາ 19:00 ໂມງ ຈະມີພິທີວຽນທຽນ, ຈູດທຸບທຽນ, ບັ້ງໄຟ ສັກກະລະບູຊາອົງພະທາດຫຼວງ ແລະ ຄືນງັນຕາມຮີດຄອງປະເພນີທີ່ເຄີຍປະຕິບັດກັນມາ. ນອກນັ້ນ, ຍັງຈະມີການສະແດງສິລະປະວັນນະຄະດີ, ສະແດງຟ້ອນ, ຂັບລຳ ຈາກກອງສິລະປະກອນສູນກາງ, ສິລະປະກອນກອງທັບ, ສິລະປະຈາກ 9 ຕົວເມືອງພາຍໃນນະຄອນຫຼວງວຽງຈັນ, ສູນວັດທະນະທຳເດັກ ແລະ ສະໂມສອນດ່ານຊ້າງ ເຂົ້າຮ່ວມການສະແດງໃນແຕ່ລະວັນ (ຢຸ່ເວທີກາງ), ແຕ່ລະມື້ແມ່ນເປີດປະຕູໃຫ້ມວນຊົນເຂົ້າທ່ຽວຊົມງານ ເລີ່ມແຕ່ເວລາ 09:00-23:00 ໂມງ.

ໃນບຸນນະມັດສະການພະທາດຫຼວງ ກໍຄື ງານວາງສະແດງສິນຄ้า ປະຈຳປີ 2026 ນະຄອນຫຼວງວຽງຈັນ ໄດ້ມີສິນຄ้າທີ່ເປັນຜະລິດຕະພັນຂອງຄົນລາວເຮົາເຮັດເອງຫຼາກຫຼາຍຊະນິດ ເປັນຕົ້ນ ສິນຄ้າໜຶ່ງເມືອງໜຶ່ງຜະລິດຕະພັນ ຫຼື ໂອດ້ອບ, ສິນຄ้າຄອບຄົວຕົວແບບທີ່ຈະກ้າວເປັນສິນຄ้າໂອດ້ອບ ແລະ ສິນຄ้າຂອງບັນດາວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ ທັງພາຍໃນ ແລະ ຕ่າງປະເທດ ມາວາງສະແດງ ແລະ ຈຳໜ່າຍ ໃຫ້ແກ່ປະຊາຊົນບັນດາເຜ่ົ່າພາຍໃນນະຄອນຫຼວງວຽງຈັນ, ຕ่າງແຂວງ ແລະ ແຂກຕ่າງປະເທດໄດ້ເຫັນ ແລະ ຊ่ວຍຊຸມໃຊ້ຜະລິດຕະພັນສິນຄ้າລາວ, ພ້ອມທັງເປັນການແລກປ่ຽນບົດຮຽນ ແລະ ປະສົບການຕ่າງໆຂອງບັນດາຫົວໜ่ວຍທຸລະກິດດ้ວຍກັນ ຊຶ่ງງານວາງສະແດງສິນຄ้າຈະຈັດຢ่ຸເດີ່ນສະໜາມຫຼວງ ແລະ ສູນການຄ้າລາວ-ໄອເຕັກ.

ຢ่າງໃດກໍຕາມ, ການຈັດງານໃນຄັ້ງນີ້, ຄະນະຈັດງານຍັງໄດ້ນຳໃຊ້ກຳລັງເຈ້ົ້າໜ้າທີ່ ປກສ-ປກຊ ແລະ ຊາວໜ่ຸມເຂົ້າຮັບໃຊ້ ເພື່ອຮັກສາຄວາມສະຫງົບ, ປອດໄພ ແລະ ອຳນວຍຄວາມສະດວກໃນການສັນຈອນ ໃຫ້ຮັບປະກັນຮອບດ้ານ; ຈັດຕັ້ງໜ่ວຍງານຮັກສາຄວາມສະອาด, ເກັບມ้ຽນຂີ້ເຫຍື້ອອອກຈากຂอบເຂດບໍລິເວນງານບຸນ ໃຫ้ສຳເລັດກ่ອน 6 ໂມງເຊ้ົาຂອງແຕ่ລะວັນ; ກะກຽມພะນักงานแพดໝໍ, พาหะนะ, อุปกรอบการแพด, ยาปั่นป้ออสุกเสิน เพื่อมาบໍລິการຢ่ຸສะถานที่จัดงาน ແລะ ส้างละบบโถสะบาปะชาสำพันทุกถ่ินที่จะเข้ามาท่ຽวในงานบุน. นอกจากนี้, ยังมีการแต่งตั้งคะนะรับผิดชอบชี้นำ ແລะ ຄะນะຮັบຜິດຊอบแต่ละหน่อยงาน, ถ้ืนถอ้า ແລะ ກຳນົດລะบบชื่อถาอ เพื่อเป็นบ่อนอิงอำนอย, ถุ้มถองในการจัดตั้งเถื่อนไหอกีดจะกำต่างๆ.

